ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ..63../ສພຂ.ຊຍ
ໄຊຍະບູລີ, ວັນທີ..12...ສິງຫາ 2022

# ມະຕິ
## ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ປີ 2015 ມາດຕາ 77 ກ່ຽວກັບສິດ ແລະ ໜ້າທີ່ ຂອງສະພາປະຊາຊົນແຂວງ;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ສະບັບປີ 2016 ມາດຕາ 59 ກ່ຽວກັບກອງປະຊຸມສະໄໝສາມັນປະຈຳປີ ຄັ້ງທີໜຶ່ງ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຕໍ່ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳ 6 ເດືອນຕົ້ນປີ 2022 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ໃນກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ II.

### ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳ 6 ເດືອນຕົ້ນປີ 2022.**

ກອງປະຊຸມ ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳ 6 ເດືອນຕົ້ນປີ 2022 ແລະ ຊົມເຊີຍອົງການປົກຄອງແຂວງ ທີ່ໄດ້ພະຍາຍາມສູ້ຊົນຈັດຕັ້ງປະຕິບັດ ມະຕິສະພາປະຊາຊົນແຂວງ ກ່ຽວກັບແຜນງົບປະມານແຫ່ງລັດ ປະຈຳປີ 2022 ເຮັດໃຫ້ມີຜົນສຳເລັດຫຼາຍດ້ານ ດັ່ງນີ້:

1. **ດ້ານລາຍຮັບ:** ປະຕິບັດໄດ້ 531,49 ຕື້ກີບ, ເທົ່າກັບ 47% ຂອງແຜນການປີ, ໃນນີ້:
   - **ລາຍຮັບພູດສູນກາງ:** ປະຕິບັດໄດ້ 437,24 ຕື້ກີບ, ເທົ່າກັບ 49% ຂອງແຜນການປີ;
   - **ລາຍຮັບພາຍໃນແຂວງ:** ປະຕິບັດໄດ້ 94,25 ຕື້ກີບ, ເທົ່າກັບ 41% ຂອງແຜນການປີ, ໃນນັ້ນ:

+ **ສ່ວຍສາອາກອນ:** ປະຕິບັດໄດ້ 85,92 ຕື້ກີບ, ເທົ່າກັບ 37% ຂອງແຜນການປີ;

+ **ຄຸ້ມຄອງຊັບສິນຂອງລັດ:** ປະຕິບັດໄດ້ 8,32 ຕື້ກີບ, ເທົ່າກັບ 146% ຂອງແຜນການປີ;

- **ການແບ່ງຂັ້ນຄຸ້ມຄອງລະຫວ່າງແຂວງ ແລະ ເມືອງ:**
  + **ການເກັບລາຍຮັບຂັ້ນແຂວງຄຸ້ມຄອງ** ປະຕິບັດໄດ້ 72,25 ຕື້ກີບ, ເທົ່າກັບ 40,57% ຂອງແຜນການປີ;
  + **ການເກັບລາຍຮັບຂັ້ນເມືອງຄຸ້ມຄອງ** ປະຕິບັດໄດ້ 22,00 ຕື້ກີບ, ເທົ່າກັບ 55,71% ຂອງແຜນການປີ.

2. **ດ້ານລາຍຈ່າຍ:** ປະຕິບັດໄດ້ 245,47 ຕື້ກີບ, ເທົ່າກັບ 52% ຂອງແຜນການປີ;
3. **ການດຸ່ນດ່ຽງງົບປະມານຈາກສູນກາງ:** ປະຕິບັດໄດ້ 190,43 ຕື້ກີບ, ເທົ່າກັບ 79% ຂອງແຜນການປີ.

**ມາດຕາ 2 ຮັບຮອງເອົາທິດທາງແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນທ້າຍປີ 2022**

ກອງປະຊຸມ ຮັບຮອງເອົາຕົວເລກແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນທ້າຍປີ 2022 ດັ່ງນີ້:

1. **ດ້ານລາຍຮັບ**: ສູ້ຊົນເກັບລາຍຮັບ 6 ເດືອນທ້າຍປີ ໃຫ້ໄດ້ 593,88 ຕື້ກີບ, ເທົ່າກັບ 53% ຂອງແຜນການປີ, ຄາດຄະເນໝົດປີ ປະຕິບັດໄດ້ 1.125,37 ຕື້ກີບ ໃນນີ້:
   - **ລາຍຮັບພູດສູນກາງ:** ໃຫ້ໄດ້ 453,62 ຕື້ກີບ, ເທົ່າກັບ 51% ຂອງແຜນການປີ, ຄາດຄະເນໝົດປີປະຕິບັດໃຫ້ໄດ້ 890,86 ຕື້ກີບ;
   - **ລາຍຮັບພາຍໃນແຂວງ**: ໃຫ້ໄດ້ 140,26 ຕື້ກີບ, ເທົ່າກັບ 59% ຂອງແຜນການປີ, ຄາດຄະເນໝົດປີປະຕິບັດໄດ້ 234,51 ຕື້ກີບ, ໃນນີ້:
     + **ສ່ວຍສາອາກອນ**: ສູ້ຊົນໃຫ້ໄດ້ 142,88 ຕື້ກີບ, ເທົ່າກັບ 62% ຂອງແຜນປີ, ຄາດຄະເນໝົດປີປະຕິບັດໄດ້ 228,80 ຕື້ກີບ;
     + **ຄຸ້ມຄອງຊັບສິນຂອງລັດ**: ສູ້ຊົນໃຫ້ໄດ້ຕື່ມ 2,05 ຕື້ກີບ;
2. **ດ້ານລາຍຈ່າຍ:** ເອົາໃຈໃສ່ຄຸ້ມຄອງລາຍຈ່າຍ ໃຫ້ຢູ່ໃນລະດັບ 227,43 ຕື້ກີບ, ເທົ່າກັບ 48% ຂອງແຜນການປີ, ຄາດຄະເນໝົດປີ ໃຫ້ໄດ້ 472,90 ຕື້ກີບ;
3. **ການດຸ່ນດ່ຽງງົບປະມານ:** ສູ້ຊົນຮັບເອົາການດຸ່ນດ່ຽງຈາກສູນກາງໃຫ້ໄດ້ 47,96 ຕື້ກີບ, ເທົ່າກັບ 21% ຂອງແຜນການປີ, ຄາດຄະເນໝົດປີ ໃຫ້ໄດ້ 238,39 ຕື້ກີບ;
4. ສຸມໃສ່ຈັດຕັ້ງປະຕິບັດ 7 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

**ມາດຕາ 3 ມາດຕະການຈັດຕັ້ງປະຕິບັດ**

ກອງປະຊຸມເຫັນດີຮັບຮອງເອົາ 13 ມາດຕະການດ້ານລາຍຮັບ ແລະ 3 ມາດຕະການດ້ານລາຍຈ່າຍ ຕາມການສະເໜີຂອງອົງການປົກຄອງແຂວງ, ເພື່ອຮັບປະກັນການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດຂອງແຂວງຕາມແຜນການທີ່ວາງໄວ້, ກອງປະຊຸມສະເໜີໃຫ້ອົງການປົກຄອງແຂວງ ເອົາໃຈໃສ່ປະຕິບັດມາດຕະການເພີ່ມເຕີມ ດັ່ງນີ້:

1. ກອງປະຊຸມສະເໜີໃຫ້ອົງການປົກຄອງແຂວງ ສູ້ຊົນປະຕິບັດ ແຜນລາຍຮັບ ແລະ ຄຸ້ມຄອງລາຍຈ່າຍປະຈຳປີ, ພ້ອມທັງ ສືບຕໍ່ປະຕິບັດ 12 ມາດຕະການ ທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາປະຊາຊົນແຂວງ ຊຸດທີ II;
2. ສືບຕໍ່ຫັນການເກັບລາຍຮັບເປັນທັນສະໄໝ ດ້ວຍລະບົບດີຈີຕອນ, ຂະຫຍາຍຖານລາຍຮັບເຂົ້າສູ່ອາກອນມູນຄ່າເພີ່ມ (Taxris) ໃຫ້ໄປຕາມແຜນທີ່ກຳນົດໄວ້, ເອົາໃຈໃສ່ປະຕິບັດວິໄນ ແຜນການ ການເງິນ ຢ່າງເຂັ້ມງວດ;

3. ສືບຕໍ່ຊຸກຍູ້ ການແກ້ໄຂການປະຕິບັດ ລາຍຮັບ-ລາຍຈ່າຍ ທີ່ຕິດພັນກັບຜົນການກວດສອບປະຈຳປີຜ່ານມາ ໃຫ້ມີທ່າອ່ຽງດີຂຶ້ນ;
4. ເອົາໃຈໃສ່ກວດກາຄືນການເກັບລາຍຮັບວິຊາການຂອງຂະແໜງການ ເພື່ອມອບເຂົ້າງົບປະມານໃຫ້ຄົບຖ້ວນຕາມລະບຽບກົດໝາຍ;
5. ສືບຕໍ່ເອົາໃຈໃສ່ ປະຕິບັດນະໂຍບາຍ ປະຢັດ ແລະ ຕ້ານການຟຸມເຟືອຍ ງົບປະມານຂອງລັດ ຕາມນິຕິກຳທີ່ວາງອອກ;
6. ສືບຕໍ່ເກັບລາຍຮັບຈາກການແກ້ໄຂພາຫະນະທີ່ບໍ່ຖືກຕ້ອງ ໃຫ້ຄົບຖ້ວນ ແລະ ທັນເວລາ;
7. ເອົາໃຈໃສ່ປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ຕິດພັນກັບແຜນງົບປະມານແຫ່ງລັດຂອງແຂວງ ໃຫ້ເຂັ້ມງວດ, ມີຜົນສັກສິດ ຕິດພັນກັບການປະຕິບັດຕາມຫຼັກການ ທີ່ໄດ້ກຳນົດໄວ້ໃນວາລະແຫ່ງຊາດຄື: ເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ອົງການປົກຄອງແຂວງ ຊີ້ນຳບັນດາພະແນກການ, ອົງການລັດທຽບເທົ່າ ແລະ ອົງການປົກຄອງເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ຄະນະປະຈຳ ສະພາປະຊາຊົນແຂວງ, ບັນດາຄະນະກຳມະການ ແລະ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ ສືບຕໍ່ຊຸກຍູ້ ແລະ ດຳເນີນການຕິດຕາມກວດກາ ການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິລັນ ຄຳພັນເພັງ